ຖ້າທ່ານ
ມີຄຳຖາມ
ຫຼືຕ້ອງການ
ຄວາມຊ່ວຍເຫຼືອ
ໃຫ້ໂທໃນວັນນີ້

**503-223-8197**
ເຂດກຳແພງເມືອງພອດແລນ

**1-800-424-3247**
ເລກໂທສຳຫຼັບຄົນຫູໜວກ (TTY)
ນອກເຂດກຳແພງເມືອງພອດແລນ

ຄະນະກັມການດູແລການເອົາເຮືອນຢູ່
ທີ່ຍຸຕິທັມ ຂອງຣັດອໍຣິກອນ
**The Fair Housing Council of Oregon**

ໜັງສືນີ້ມີໃຫ້ໃນຫຼາຍຮູບແບບ ສຳຫຼັບຄົນພິການ.

FAIR HOUSING COUNCIL of Oregon
1020 SW Taylor Street, Suite 700
Portland, Oregon 97205-2512
ໂທລະສັບ: 503-223-8197 ຫຼື 1-800-424-3247 (TTY - ຄົນຫູໜວກ)
www.fhco.org ຫຼື E-mail: information@fhco.org
ສາຍໂທດ່ວນສຳຫຼັບການຮ້ອງຮຽນ ຂອງ HUD: 1-800-877-0246

# ຢ່າໃຫ້ການຈຳແນກ ໃນການເອົາເຮືອນຢູ່ ປິດທາງຂອງທ່ານ

## Don't Let Housing Discrimination Shut You Out!

ຖ້າທ່ານອາສັຍຢູ່ໃນຣັດອໍຣິກອນ ຫຼືຄລາກຄາວຕີ ຣັດວໍຊິງຕັນ, ແລະມີ ບັນຫາດ້ານການເອົາເຮືອນຢູ່ ເນື່ອງຈາກ ສາເຫດໃດນຶ່ງຕໍ່ລົງໄປນີ້, ສິດທິໃນການ ເອົາເຮືອນຢູ່ທີ່ຍຸຕິທັມຂອງທ່ານ ອາດຖືກ ລ່ວງລໍ້າ!

**FAIR HOUSING COUNCIL**
of Oregon

[Lao]

## ການເອົາເຮືອນຢູ່ທີ່ຍຸຕິທັມ ແມ່ນຫຍັງ?

ກົດໝາຍວ່າດ້ວຍ ການເອົາເຮືອນຢູ່ທີ່ຍຸຕິທັມ (Fair Housing) ຫ້າມບໍ່ໃຫ້ມີການຈຳແນກທີ່ຜິດກົດໝາຍ ໃນການເອົາເຮືອນຢູ່. ການຈຳແນກທີ່ຜິດກົດໝາຍນັ້ນແມ່ນ ເມື່ອທ່ານຖືກປະຕິບັດນຳ ທີ່ແຕກຕ່າງກັບຜູ້ອື່ນ ຍ້ອນວ່າທ່ານຫຼືຜູ້ອື່ນໆແມ່ນສມາຊິກຂອງກຸ່ມນຶ່ງສເພາະ ຫຼື "ຊົນຊັ້ນທີ່ໄດ້ຮັບການປົກປ້ອງ (protected class)" ຊົນຊັ້ນນຶ່ງ.

*"ຊົນຊັ້ນທີ່ໄດ້ຮັບການປົກປ້ອງ" ຢູ່ໃນກົດໝາຍຂອງຣັຖບານຣວມມີ:*

- ເຊື້ອຊາດ
- ຜິວພັນ
- ສາສນາ
- ສັນຊາດດັ້ງເດີມ
- ເພດ
- ຄວາມພິການທາງກາຍຫຼືໃຈ
- ພາວະຄອບຄົວ*

*ກົດໝາຍຂອງຣັດອໍຣິກອນ ເພີ້ມເຕີມອີກວ່າ:*

- ແຫຼ່ງມາຂອງຣາຍໄດ້
- ຖານະແຕ່ງງານ

*ບາງເມືອງຍັງເພີ້ມເຕີມອີກວ່າ:*

- ອາຍຸ
- ເພດສຳພັນ

ຖ້າທ່ານອາສັຍຢູ່ໃນຣັດອໍຣິກອນ ຫຼືຄລາກຄາວຕີ ຣັດວໍຊິງຕັນ, ແລະບັນຫາຂອງທ່ານແມ່ນ ກ່ຽວພັນກັບນຶ່ງໃນປະເພດຂ້າງເທິງນັ້ນ, ທ່ານສາມາດໂທຫາພວກເຮົາ ເພື່ອຂໍເອົາຂໍ້ມູນເພີ້ມເຕີມໄດ້.

* ຮວມເອົາການຖືພາ ຫຼືມີເດັກນ້ອຍອາຍຸຕ່ຳກວ່າ 18 ປີ ຢູ່ໃນຄອບຄົວ. ມີຂໍ້ຍົກເວັ້ນຂໍ້ດຽວ ຂອງການປົກປ້ອງ ສຳຫຼັບພາວະຄອບຄົວແມ່ນ ເມື່ອການເອົາເຮືອນຢູ່ນັ້ນ ແມ່ນເຮືອນສຳຫຼັບໃຫ້ຜູ້ສູງອາຍຸຢູ່.

## ຂ້າພະເຈົ້າຈະຮູ້ໄດ້ວ່າ ແມ່ນການຈຳແນກໃນການເອົາເຮືອນຢູ່ນັ້ນແນວໃດ ?

ການຈຳແນກສາມາດເປັນແບບເຫັນໄດ້ຊັດເຈນ ຫຼືແບບມີເງື່ອນງຳ. ຕໍ່ລົງໄປນີ້ແມ່ນຕົວຢ່າງຂອງວິທີ ຊຶ່ງຜູ້ກຳກັບເຮືອນເຊົ່າ ຫຼືຜູ້ໃຫ້ເຮືອນຢູ່ປະເພດອື່ນໆ ອາດມີການຈຳແນກ:

- ປະຕິເສດການໃຫ້ໂອກາດທ່ານເຊົ່າ, ຊື້, ຫຼືຕໍ່ຮອງໃນການເອົາເຮືອນຢູ່.
- ບໍ່ໃຫ້ທ່ານຕື່ມຟອມຄຳຮ້ອງ ຫຼືໃຫ້ຄຳຕອບທີ່ເຊັດເຈນ ກ່ຽວກັບໃບຄຳຮ້ອງຂອງທ່ານ ພາຍໃນເວລາສີ່ຫ້າວັນ.
- ບອກທ່ານວ່າເຮືອນບໍ່ຫວ່າງ ເຖິງແມ່ນວ່າແທ້ຈິງຫວ່າງ.
- ບອກໃຫ້ທ່ານໄປຫາເຮືອນ ໃນເຂດໃດນຶ່ງ, ຄຸ້ມໃດນຶ່ງ, ຫຼືພາກສ່ວນໃດນຶ່ງສເພາະຂອງຫ້ອງແຖວ .
- ປະຕິເສດບໍ່ໃຫ້ທ່ານກູ້ຢືມເງິນ, ປະກັນພັຍ, ຫຼືການບໍຣິການດ້ານການຢືມເງິນ ເພື່ອເອົາເຮືອນຢູ່ ຍ້ອນວ່າການປະກອບຂອງເຊື້ອຊາດຂອງຄຸ້ມບ້ານ.
- ແບ່ງແຍກທ່ານອອກ, ປະຕິເສດການໃຫ້ການບໍຣິການ, ຫຼືປະຕິບັດກັບທ່ານຢ່າງແຕກຕ່າງ (ເຊັ່ນຕົວຢ່າງຄ່າເຊົ່າສຳຫຼັບທ່ານນັ້ນ ສູງກວ່າຄົນອື່ນໆ).
- ລັງຄວານຫຼືດູແຄນທ່ານ.
- ຖາມຄຳຖາມທີ່ດູແຄວນທ່ານ.
- ເອົາໃບແຈ້ງໃຫ້ທ່ານອອກ ແລະບໍ່ມີສາເຫດທີ່ສົມເຫດສົມຜົນ (ເຊັ່ນຄ່າເຊົ່າຊັກຊ້າ).
- ໃຫ້ຄຳເວົ້າຈາບົ່ງບອກວ່າລາວຊ່ວຍທ່ານບໍ່ໄດ້.
- ແນະນຳໃຫ້ທ່ານໄປເຮັດນຳຜູ້ອື່ນ.
- ບອກທ່ານວ່າ, ທ່ານບໍ່ສາມາດປ່ຽນແປງ ເຮືອນຂອງທ່ານ ຊຶ່ງທ່ານຈຳເປັນເພາະຄວາມພິການ, ເຖິງວ່າຈ່າຍດ້ວຍເງິນຂອງທ່ານເອງກໍຕາມ.
- ປະຕິເສດການຮ້ອງຂໍອັນສົມເຫດສົມຜົນຂອງທ່ານ ໃນການດັດແປງກົດຣະບຽບ ການຢູ່ອາສັຍທີ່ທ່ານມີຄວາມຈຳເປັນເນື່ອງຈາກຄວາມພິການຂອງທ່ານ.

## ຈົ່ງໃຫ້ພວກເຮົາຊ່ວຍປົກປ້ອງສິດທິຂອງທ່ານ

ເມື່ອທ່ານໂທຫາ ຄະນະກັມມາທິການດູແລ ການເອົາເຮືອນຢູ່ທີ່ຍຸຕິທັມ ຂອງຣັດອໍຣິກອນ, ພວກເຮົາຈະຂໍສຳພາດທ່ານ ເພື່ອຮວບຮວມເອົາຂໍ້ມູນທີ່ຈຳເປັນ. ຂໍໃຫ້ທ່ານຈົ່ງກຽມພ້ອມການໃຫ້:

- ທີ່ຢູ່ເຮືອນ
- ຊື່ບຸກຄົນກ່ຽວຂ້ອງ
- ຊື່ພຍານຖ້າມີ
- ວັນເກີດເຫດ

ໃນບາງກໍຣະນີ, ຄະນະກັມມາທິການ ສາມາດທຳການທົດສອບການເອົາເຮືອນຢູ່ທີ່ຍຸຕິທັມ ຊຶ່ງອາດຍຶດການຫວງຂອງອອກໄປ. ອີກຢ່າງ ທ່ານຈະໄດ້ຂໍ້ມູນກ່ຽວກັບ ສິດທິທາງກົດໝາຍແລະທາງເລືອກຕ່າງໆຂອງທ່ານ ເໝືອນກັນ.

ຂຶ້ນຢູ່ກັບຜົນທີ່ອອກມາ, ພວກເຮົາສາມາດແນະນຳທ່ານໄປຫາທະນາຍຄວາມ, ກົມຄຸ້ມຄອງສິດທິພົລເຮືອນ ຂອງຫ້ອງການແຮງງານແລະອຸສາຫະກຳ (Bureau of Labor and Industry Civil Rights Division - BOLI), ຫຼືຫ້ອງການດູແລ ການເອົາເຮືອນຢູ່ທີ່ຍຸຕິທັມ ແລະມີໂອກາດທີ່ສເມີພາບ ຂອງຫ້ອງການເຄຫະສຖານ ແລະຂຫຍາຍເຂດເທສບານ ຂອງຣັຖບານກາງ (U.S. Department of Housing and Urban Development - HUD).

*ການຈັດພິມປຶ້ມນ້ອຍເຫຼັ້ມນີ້ ແມ່ນໄດ້ຮັບຄວາມອຸປະຖັມໂດຍໂຄງການ **HUD Community Development Block Grant (CDBG)** ແລະຫ້ອງຄະນະກັມມາທິການດູແລ ການເອົາເຮືອນຢູ່ທີ່ຍຸຕິທັມ ຂອງຣັດອໍຣິກອນ. ການອອກແບບແລະບໍຣິການ ດ້ານການພລິດ ແມ່ນໂດຍພແນກບໍຣິການດ້ານການຕລາດ ຂອງຫ້ອງການຂຫຍາຍເສຖກິດຣັດອໍຣິກອນ **(Oregon Economic Development Department)**.*